PetroTrade
ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ: 0047 /PTL/2020

ນະຄອນຫຼວງວຽງຈັນ, ວັນທີ: 11 JUN 2020

ບົດບັນທຶກ ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019
ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ປທລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ເມື່ອ ວັນທີ 29 ພຶດສະພາ 2020 ເວລາ 10:00 ໂມງ ທີ່ອາຄານຕະຫຼາດຫຼັກຊັບລາວ, ຫ້ອງປະຊຸມໃຫຍ່ຊັ້ນ 8, ບ້ານ ໂພນທັນ , ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ໂດຍມີຜູ້ຖືຮຸ້ນ ແລະ ຜູ້ຮັບມອບສິດເຂົ້າຮ່ວມປະຊຸມທັງໝົດ 19 ທ່ານ, ຖືຮຸ້ນ ລວມ 198,827,701 ຮຸ້ນ, ຄິດເປັນ 84.61% ຂອງຈຳນວນຮຸ້ນທັງໝົດທີ່ຈຳໜ່າຍແລ້ວຂອງບໍລິສັດ.

ພິທີກອນດຳເນີນກອງປະຊຸມ ໄດ້ແນະນຳສະມາຊິກສະພາບໍລິຫານແຕ່ລະທ່ານ ແລະ ເຈົ້າໜ້າທີ່ທ່ຽວຂ້ອງທີ່ໄດ້ເຂົ້າຮ່ວມກອງປະຊຸມດັ່ງນີ້:

ສະມາຊິກສະພາບໍລິຫານ	**ຕຳແໜ່ງ**
1. ທ່ານ ນາງ ຈັນທະດອນ ເມກສະຫວັນ	: ຮອງປະທານສະພາບໍລິຫານ;
2. ທ່ານ ນາງ ດາລີ ພົນເສນາ	: ສະມາຊິກສະພາບໍລິຫານອິດສະຫຼະ, ປະທານຄະນະກຳມະການກວດສອບຄວາມສ່ຽງພາຍໃນ;
3. ທ່ານ ໝຸພັນ ມະຫາວົງ	: ສະມາຊິກສະພາບໍລິຫານອິດສະຫຼະ, ຄະນະກຳມະການກວດສອບຄວາມສ່ຽງພາຍໃນ;
4. ທ່ານ ໂພໄຊ ຈັນທະວົງສາ:	: ສະມາຊິກສະພາບໍລິຫານອິດສະຫຼະ, ຄະນະກຳມະການກວດສອບຄວາມສ່ຽງພາຍໃນ;
5. ທ່ານ ບຸນຖັນ ຈິດຕະວົງ	: ສະມາຊິກສະພາບໍລິຫານ.

ສ່ວນ ທ່ານ ຈັນທອນ ສິດທິໄຊ ປະທານສະພາບໍລິຫານ ແລະ ທ່ານ ນາງ ສະຫວັນທອງ ພົງສະຫວັນ ຮອງປະທານສະພາບໍລິຫານ ຕິດພາລະກິດຈຶ່ງບໍ່ສາມາດເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ໄດ້ ແລະ ໄດ້ແຕ່ງຕັ້ງ ທ່ານ ນາງ ຈັນທະດອນ ເມກສະຫວັນ ຮອງປະທານສະພາບໍລິຫານ ເປັນປະທານກອງປະຊຸມໃນຄັ້ງນີ້ແທນ.

ໃນກອງປະຊຸມ, ຍັງມີທ່ານຜູ້ເຂົ້າຮ່ວມຕາງໜ້າຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ), ຕະຫຼາດຫຼັກຊັບລາວ (ຕລຊລ) ແລະ ຜູ້ຖືຮຸ້ນລາຍຍ່ອຍ ເປັນຄະນະຕິດຕາມ ແລະ ປະເມີນກອງປະຊຸມ; ຄະນະກວດກາ ກອງປະຊຸມ ແລະ ລົງຄະແນນສຽງ, ບໍລິສັດ Price Waterhouse Coopers (Lao) Sole Co., Ltd. (PWC)

ພິທີກອນໄດ້ແຈ້ງໃຫ້ບັນດາທ່ານຜູ້ຖືຮຸ້ນຮັບຊາບເຖິງວາລະການປະຊຸມ ພ້ອມດ້ວຍວິທີການລົງຄະແນນ ແລະ ການນັບຜົນຄະແນນໃຫ້ທຸກທ່ານຮັບຊາບດັ່ງນີ້:

ວາລະການປະຊຸມ:

ວາລະທີ 1. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018;

ວາລະທີ 2. ພິຈາລະນາ ແລະ ຮັບຮອງ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2019 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2019;

ວາລະທີ 3. ພິຈາລະນາບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດ ປະຈຳປີ 2019;

ວາລະທີ 4. ພິຈາລະນາ ແລະ ຮັບຮອງເອົາ ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2020;

ວາລະທີ 5. ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ Price Waterhouse Coopers (Lao) Sole Co., Ltd. (“PWC”) ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2020 ຢູ່ລະຫວ່າງ 34.000-37.000 ໂດລາສະຫາລັດ.

ວິທີການລົງຄະແນນສຽງ:

- ໜຶ່ງຮຸ້ນເທົ່າກັບໜຶ່ງສຽງ ແລະ ຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່;
- ໃນການລົງຄະແນນສຽງໃນແຕ່ລະວາລະກອງປະຊຸມ ປະທານຈະຖາມກອງປະຊຸມວ່າມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ; ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງໝາຍ ✓ ລົງໃນຊ່ອງ ☐ ບໍ່ເຫັນດີ ໃນບັດລົງຄະແນນ ແລະ ຍົກບັດກາເຄື່ອງໝາຍນັ້ນຂຶ້ນ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບເອົາບັດລົງຄະແນນ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດຖືວ່າຜູ້ຖືຮຸ້ນທ່ານນັ້ນມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ;
- ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສັນທະນັ້ນ ບໍລິສັດໄດ້ນຳເອົາການລົງຄະແນນສຽງ ຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສັນທະດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງໃນບັດລົງຄະແນນສຽງໃນກອງປະຊຸມອີກ.

ການນັບຄະແນນສຽງ ແລະ ແຈ້ງຜົນການນັບຄະແນນສຽງ:

- ການນັບຄະແນນສຽງໃນແຕ່ລະວາລະຈະນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຄະແນນສຽງຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ທີ່ອອກສຽງບໍ່ເຫັນດີມາລົບອອກຈາກ ຈຳນວນຮຸ້ນທັງໝົດ ຂອງຜູ້ທີ່ມາຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.
- ເມື່ອສິ້ນສຸດການປະຊຸມໃນແຕ່ລະວາລະແລ້ວ ທ່ານ ປະທານກອງປະຊຸມ ຈະຂໍໃຫ້ຜູ້ຖືຮຸ້ນລົງມະຕິຮັບຮອງວ່າ ເຫັນດີ ຫຼື ບໍ່ເຫັນດີ ຫຼັງຈາກນັ້ນເຈົ້າໜ້າທີ່ຈະຄິດໄລ່ຄະແນນ ແລະ ປະທານກອງປະຊຸມຈະປະກາດຜົນການລົງຄະແນນສຽງໃຫ້ກອງປະຊຸມຮັບຊາບໃນແຕ່ລະວາລະທັນທີ ກ່ອນເລີ່ມປະຊຸມໃນວາລະຕໍ່ໄປ.

ກໍລະນີຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສິດມີຄຳຖາມ ຫຼື ຂໍ້ສະເໜີແນະໃດໆ ໃນແຕ່ລະວາລະລຶບກ່ອນທ່ານກະລຸນາຍົກມືຂຶ້ນພ້ອມແຈ້ງຊື່, ນາມສະກຸນ ແລະ ສະຖານະວ່າເປັນຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສິດ ເພື່ອໃຊ້ປະກອບການບັນທຶກໃນບົດລາຍງານການປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ແລະ ອີກເທື່ອໜຶ່ງ, ໂດຍອີງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ, ຂ້າພະເຈົ້າຂໍອະນຸຍາດແຈ້ງໃຫ້ບັນດາທ່ານຊາບວ່າ: ໃນກອງປະຊຸມມື້ນີ້ບໍ່ອານຸຍາດໃຫ້ຜູ້ສັງເກດການປະກອບຄຳເຫັນ ກ່ຽວກັບວາລະຂອງກອງປະຊຸມ.

ຫຼັງຈາກນັ້ນທ່ານ ທ່ານ ນາງ ຈັນທະດອນ ເມກສະຫວັນ ປະທານກອງປະຊຸມ ເປັນຜູ້ກ່າວເປີດ ແລະ ດຳເນີນການປະຊຸມໃນແຕ່ລະວາລະ ໂດຍອີງຕາມວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ມີລາຍລະອຽດດັ່ງນີ້:

ວາລະທີ 1. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018

ທ່ານ ປະທານກອງປະຊຸມ ໄດ້ລາຍງານຕໍ່ທີ່ປະຊຸມ: ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ໄດ້ຈັດຂຶ້ນໃນວັນທີ 26 ເມສາ 2019 ໂດຍບໍລິສັດໄດ້ເຮັດບົດບັນທຶກຕາມເນື້ອໃນຂອງກອງປະຊຸມຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ.

ຫຼັງຈາກທ່ານ ປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ທ່ານ ປະທານກອງປະຊຸມ ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198,823,701 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198,823,701 ສຽງ ຄິດເປັນ 100 %.

ວາລະທີ 2. ພິຈາລະນາ ແລະ ຮັບຮອງ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2019 ແລະ ເອກະສານລາຍງານ
ການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2019

ທ່ານ ປະທານກອງປະຊຸມ ໄດ້ລາຍງານຕໍ່ທີ່ປະຊຸມກ່ຽວກັບຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2019ເຊິ່ງມີລາຍລະອຽດດັ່ງນີ້:

❖ ຍອດຂາຍລວມຂອງ 2019 ປະຕິບັດໄດ້ 84.28% ຂອງແຜນປີ.

ລ/ດ	ປະເພດນ້ຳ	ຍອດຂາຍ 2019 (ລິດ)	ແຜນປີ 2019 (ລິດ)	ສ່ວນຕ່າງ (ລິດ)
1	**ພລາຕິນຳ PLT**	14,518,000	15,159,200	(641,200)
2	**ໂກລ GLD**	24,036,000	24,730,200	(694,200)
3	**ມາດຕະຖານ STD**	17,747,000	27,543,220	(9,796,220)
4	**ທ້ອງຖິ່ນພັດທະນາ THN**	10,675,000	12,095,960	(1,420,960)
ລວມ		**66,976,000**	**79,528,580**	**(12,552,580)**

ລ/ດ	ລູກຄ້າໂຄງການ	ຍອດຂາຍ 2019 (ລິດ)	ແຜນປີ 2019 (ລິດ)	ສ່ວນຕ່າງ (ລິດ)
1	Other-B2B	8,867,000	12,270,000	(3,403,000)
2	Phubia mining	48,480,000	50,385,000	(1,905,000)
3	SINOHYDRO	9,669,000	12,373,000	(2,704,000)
4	Yunnan	35,341,000	46,228,000	(10,887,000)
ລວມ		**102,357,000**	**121.256.000**	**(18,899,000)**

ລ/ດ	ສິນຄ້າ	ຍອດຂາຍ 2019 (ລິດ)	ແຜນປີ 2019 (ລິດ)	ສ່ວນຕ່າງ (ລິດ)
1	ນ້ຳມັນເຄື່ອງ	10,335	155,000	(144,665)

ຍອດຂາຍລວມ 2019 (ລິດ)	ແຜນປີ 2019 (ລິດ)	ສ່ວນຕ່າງ (ລິດ)	ຄິດເປັນ
169,343,335	200,939,580	(31,596,245)	**84.28%**

ສ່ວນເອກະສານລາຍງານການເງິນ ປະຈຳປີ 2019 ທີ່ຜ່ານການກວດສອບຈາກບໍລິສັດກວດສອບພາຍນອກລາຍລະອຽດຕາມເອກະສານຄັດຕິດໃນກອງປະຊຸມ.

ຫຼັງຈາກທ່ານ ປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້, ມີຜູ້ຖືຮຸ້ນຖາມດັ່ງນີ້:

ທ່ານ ກ້າ ໄຟດ່ຽງລໍເບຣຍຢາວ ຜູ້ຖືຮຸ້ນມາດ້ວຍຕົນເອງ ປະກອບຄຳເຫັນ ຍ້ອນສາເຫດໃດແຜນທີ່ບໍລິສັດຕັ້ງໄວ້ ແລະ ການປະຕິບັດຕົວຈິງມີສ່ວນຜິດດ່ຽງຫຼາຍ? ຍ້ອນບໍລິສັດຕັ້ງແຜນໄວ້ສູງເກີນໄປບໍ່ ຫຼື ຍ້ອນສະພາບຫຍັງ ແລະ ໃນຕໍ່ໜ້າບໍລິສັດຈະມີແຜນຍຸດທະສາດແນວໃດເພື່ອໃຫ້ບໍລິສັດສາມາດປະຕິບັດແຜນການໃຫ້ມີຄວາມຜິດດ່ຽງໜ້ອຍລົງ ເພື່ອເຮັດໃຫ້ຜົນການດຳເນີນງານຂອງບໍລິສັດດີຂຶ້ນ ໂດຍສະເພາະໃຫ້ມີຄ່າ ROA ແລະ ROE ສູງຂຶ້ນ?

ທ່ານ ປະທານກອງປະຊຸມ ໄດ້ຊີ້ແຈ້ງວ່າ ປັດໃຈຫຼັກໆທີ່ບໍລິສັດບໍ່ສາມາດປະຕິບັດໄດ້ຕາມແຜນຍ້ອນພາກລັດຄວບຄຸ້ມການຂະຫຍາຍປ້ຳນ້ຳມັນ ແລະ ສຳລັບອຽກໂຄງການ Yunnan ສ້າງທາງດ່ວນ ທີ່ຫຼຸດແຜນຫຼາຍຍ້ອນໂຄງການຖືກເຂດຊຸມຊົນເຮັດໃຫ້ຕ້ອງຊົດເຊີຍປະຊາຊົນ ເປັນເຫດໃຫ້ໂຄງການລ້າຊ້າ ແລະ ການຂາຍນ້ຳມັນໃຫ້ໂຄງການກໍ່ເລື່ອນໄປດ້ວຍ.

ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ ທ່ານ ປະທານກອງປະຊຸມ ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2019 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2019.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2019 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2019 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198,823,701 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198,823,701 ສຽງ ຄິດເປັນ 100

ວາລະທີ 3. ພິຈາລະນາບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດ ປະຈຳປີ 2019

ທ່ານ ປະທານກອງປະຊຸມ ໄດ້ລາຍງານຕໍ່ທີ່ປະຊຸມ: ອີງຕາມເອກະສານລາຍງານການເງິນທີ່ຜ່ານການກວດສອບພາຍນອກ ປະຈຳປີ 2019 ບໍລິສັດຂາດທຶນໃນການດຳເນີນທຸລະກິດ ແລະ ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 155 "ການຈ່າຍເງິນປັນຜົນ" ຫ້າມບໍ່ໃຫ້ບໍລິສັດຈ່າຍເງິນປັນຜົນເມື່ອບໍລິສັດຍັງຂາດທຶນຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ.

ຫຼັງຈາກທ່ານ ປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ທ່ານ ປະທານກອງປະຊຸມ ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດ ປະຈຳປີ 2019.


ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງການບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດ ປະຈຳປີ 2019 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198,822,701 ສຽງ ຄິດເປັນ 99.99749 %;
- ບໍ່ເຫັນດີ 5,000 ສຽງ ຄິດເປັນ 0.00251 %;
- ລວມ 198,827,701 ສຽງ ຄິດເປັນ 100 %.

ວາລະທີ 4: ພິຈາລະນາ ແລະ ຮັບຮອງເອົາ ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2020

ທ່ານ ປະທານກອງປະຊຸມ ໄດ້ລາຍງານຕໍ່ທີ່ປະຊຸມກ່ຽວກັບແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2020: ພາຍຫຼັງທີ່ ປທລ ໄດ້ສ້າງຕັ້ງ 2 ບໍລິສັດລູກ (ນຳເຂົ້າ/ສົ່ງອອກ ແລະ ຈັດຈຳໜ່າຍ) ການດຳເນີນສ່ວນຫຼາຍບໍ່ໄດ້ເປັນຂອງ ປທລ. ເພື່ອເປັນການລວມສູນພາຍໃຕ້ ປທລ ຈຶ່ງສ້າງ Shared Service Center (SSC). ເຊິ່ງວັດຖຸປະສົງ ແລະ ປະໂຫຍດຂອງສູນມີຄື:

- ເພື່ອຄວາມຄ່ອງຕົວ ແລະ ລວມສູນ;
- ເພື່ອສ້າງລາຍໄດ້ເພີ່ມໃຫ້ ປທລ;
- ເພື່ອໃຫ້ມີການຄວບຄຸມທີ່ດີຂຶ້ນ ແລະ ມີຄວາມໂປ່ງໃສກ່ຽວກັບຄ່າໃຊ້ຈ່າຍຂອງບໍລິສັດໃນເຄືອທັງໝົດ;
- ເພື່ອໃຫ້ບໍລິການເປັນມາດຕະຖານດຽວກັນ ແລະ ເປັນມືອາຊີບໃຫ້ກັບບໍລິສັດໃນເຄືອທັງໝົດ.



ຄາດຄະເນລາຍໄດ້ທັງໝົດຈາກ SSC: 471,000 ໂດລາສະຫະລັດ (ຫຼື 4,000 ລ້ານກີບ).

- ພະແນກຫ້ອງການ ຄ່າເຊົ່າຕຶກ :300,000 ໂດລາສະຫະລັດ;
- ລາຍຮັບຈາກການໃຫ້ບໍລິການໄອທີຜ່ານການດຳເນີນງານຂອງກຸ່ມ ປທລ :110,000 ໂດລາສະຫະລັດ;
- ກິດໝາຍ: 40,000 ໂດລາສະຫະລັດ;
- ການຈັດຊື້ :21,000 ໂດລາສະຫະລັດ

ຫຼັງຈາກທ່ານ ປະທານກອງປະຊຸມ ໄດ້ລາຍງານໂດຍຫຍໍ້ໃນອາລະນີ ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້, ມີຜູ້ຖືຮຸ້ນຖາມດັ່ງນີ້:

ທ່ານ ກ້າ ໄຟດ່ຽງລໍເບຣຍຢາວ ຜູ້ຖືຮຸ້ນມາດ້ວຍຕົນເອງ ປະກອບຄຳເຫັນດັ່ງນີ້:

1. ປທລ ມີເຫດຜົນຫຍັງ ຈຶ່ງຕ້ອງສ້າງ 2 ບໍລິສັດລູກ ແລະ ມີແຜນຄາດຄະເນບໍ່ວ່າ 2 ບໍລິສັດລູກຈະເພີ່ມລາຍຮັບໃຫ້ກັບ ປທລ ແນວໃດ? ຂໍໃຫ້ ປທລ ນຳສະເໜີຕົ້ນທຶນໃນການສ້າງ 2 ບໍລິສັດລູກ.
2. ບໍລິສັດລູກທີ່ ນຳເຂົ້າ/ສົ່ງອອກ ການນຳເຂົ້ານ້ຳມັນ ແມ່ນມາຈາກພາກສ່ວນໃດ ປະເທດໃຫ ຫຼື ປະເທດຫວຽດນາມ? ແລະ ສົ່ງອອກແນວໃດແດ່?

ທ່ານ ປະທານກອງປະຊຸມ ໄດ້ຊີ້ແຈ້ງດັ່ງນີ້:

1. ປທລ ດຳເນີນທຸລະກິດນ້ຳມັນຄົບວົງຈອນມາຕັ້ງແຕ່ຕົ້ນແລ້ວ. ອີງຕາມດຳລັດວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ ເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017 ບໍ່ອະນຸຍາດໃຫ້ບໍລິສັດນ້ຳມັນເຮັດດຳເນີນທຸລະກິດນ້ຳມັນຫຼາຍປະເພດ ເຊັ່ນ: ປະເພດນຳເຂົ້າ/ສົ່ງອອກ ແລະ ຈັດຈຳໜ່າຍ. ດັ່ງນັ້ນ ປທລ ຈຶ່ງຈຳເປັນຕ້ອງສ້າງ 2 ບໍລິສັດລູກຂຶ້ນ ໂດຍແຍກຊັບສິນຂອງ ປທລ ອອກໃຫ້ 2 ບໍລິສັດລູກ ໂດຍໂຄງສ້າງຊັບສິນຂອງ ປທລ ຍັງຄືເກົ່າບໍ່ໄດ້ມີການປ່ຽນແປງ ຫຼື ເພີ່ມຂຶ້ນ ແລະ ພະນັກງານກໍ່ໃຊ້ຄົນຂອງ ປທລ ຄືເກົ່າບໍ່ມີການຮັບເພີ່ມ ສ່ວນລາຍຮັບກໍ່ເຂົ້າ ປທລ ທັງໝົດ;
2. ບໍລິສັດບໍ່ມີການສົ່ງອອກນ້ຳມັນ ມີແຕ່ການນຳເຂົ້ານ້ຳມັນຢ່າງດຽວ ສ່ວນຫຼາຍນຳເຂົ້າມາຈາກໂຮງກັ່ນຂອງໄທຄື: Chevron, ESSO, IRPC, SHELL. ບໍລິສັດຍັງບໍ່ມີການນຳເຂົ້ານ້ຳມັນຈາກຫວຽດນາມ ໃນປີ 2019 ບໍລິສັດກໍ່ພະຍາຍາມຊອກແຫຼ່ງນ້ຳມັນຂອງຫວຽດນາມໂດຍການເຮັດ MOU ກັບບໍລິສັດ Petrolimex.

ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ ທ່ານ ປະທານກອງປະຊຸມ ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2020

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາ ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2020 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198,827,701 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198,827,701 ສຽງ ຄິດເປັນ 100 %.

ວາລະທີ 5. ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ Price Waterhouse Coopers (Lao) Sole Co., Ltd. ('PWC') ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2020 ຢູ່ ລະຫວ່າງ 34,000-37,000 ໂດລາສະຫາລັດ

ທ່ານ ປະທານກອງປະຊຸມ ໄດ້ລາຍງານຕໍ່ທີ່ປະຊຸມ: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ /46 ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 154 ສິດ ແລະ ໜ້າທີຂອງກອງປະຊຸມສາມັນຜູ້ຖືຮຸ້ນ ກຳນົດໃຫ້ກອງປະຊຸມ ສາມັນຜູ້ຖືຮຸ້ນເປັນຜູ້ເລືອກຕັ້ງຜູ້ກວດສອບບັນຊີ ແລະ ຄ່າຈ້າງຂອງຜູ້ກວດສອບບັນຊີ ໂດຍສະພາບໍລິຫານໄດ້ພິຈາລະນາ ເຫັນຄວນໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາແຕ່ງຕັ້ງ PWC ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2020 ໂດຍກຳນົດຄ່າຈ້າງຢູ່ລະຫວ່າງ 34,000 37,000 ໂດລາສະຫາລັດ, PWC ເປັນ 1 ໃນ 4 ບໍລິສັດກວດສອບ ບັນຊີພາຍນອກທີ່ໄດ້ຮັບອະນຸຍາດຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ. ປທລ ໄດ້ໃຊ້ບໍລິການ PWC ເປັນ ຜູ້ກວດສອບບັນຊີພາຍນອກແຕ່ປີ 2017 ຫາ 2019 ເຫັນວ່າ PWC ມີປະສົບການ ,ມີຄວາມລະອຽດຮອບຄອບໃນ ການທົບທວນ. ຊຶ່ງລາຍລະອຽດຄ່າຈ້າງແຕ່ລະປີຜ່ານມາມີດັ່ງລຸ່ມນີ້:

ປີ	ຜູ້ກວດສອບບັນຊີພາຍນອກ	ມູນຄ່າການກວດສອບ (ໂດລາສະຫາລັດ)
2017	PWC	55,000
2018	PWC	55,000
2019	PWC	34,000

ຫຼັງຈາກທ່ານ ປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວ ກໍໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບ ຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້, ມີຜູ້ຖືຮຸ້ນຖາມດັ່ງນີ້:

ທ່ານ ກ້າ ໄຟດ່າງລໍເບຣຍຢາວ ຜູ້ຖືຮຸ້ນມາດ້ວຍຕົນເອງ ປະກອບຄຳເຫັນດັ່ງນີ້:

1. ຢາກໃຫ້ບໍລິສັດແຈກເອກະສານລາຍງານການເງິນສະບັບສົມບູນ ພ້ອມໜັງສືເຊີນ ຫຼື ກ່ອນມື້ເປີດປະຊຸມ 2-3 ວັນ ເພື່ອໃຫ້ຜູ້ຖືຮຸ້ນມີເວລາສຶກສາ.
2. ຂ້າພະເຈົ້າຄາດວ່າ ລາຍຈ່າຍຄ່າກວດສອບບັນຊີພາຍນອກອາດຈະເກີນມູນຄ່າທີ່ບໍລິສັດກຳນົດໄວ້.

ທ່ານ ປະທານກອງປະຊຸມ ໄດ້ຊີ້ແຈ້ງດັ່ງນີ້:

1. ການແຈກເອກະສານລາຍງານການເງິນສະບັບສົມບູນຂອງບໍລິສັດມີຄວາມລ້າຊ້າ ບໍລິສັດຈະນຳໄປປັບປຸງແກ້ ໄຂ ໃນຄັ້ງໜ້າຈະພະຍາຍາມແຈກກ່ອນ 2-3 ວັນ ກ່ອນມື້ເປີດກອງປະຊຸມ.
2. ຄ່າຈ້າງຜູ້ກວດສອບບັນຊີພາຍນອກ ບໍລິສັດຈະພະຍາຍາມໃຫ້ໄດ້ເສຍຄ່າຈ້າງຢູ່ລະຫວ່າງ 34,000 37,000 ໂດລາສະຫາລັດ.

ທ່ານ ອິນທະເນດ ນໍຣະສິງຫ໌ ຜູ້ຖືຮຸ້ນມາດ້ວຍຕົນເອງ ປະກອບຄຳເຫັນດັ່ງນີ້:

1. ໃນການສົ່ງເອກະສານຕ່າງໆ ຢາກຂໍໃຫ້ບໍລິສັດສົ່ງທາງອີເລັກໂທນິກ ຫຼື ທາງອີເມວ ເພື່ອຄວາມຄ່ອງຕົວ ພ້ອມທັງ ເປັນການປະຢັດເວລາ ແລະ ຄ່າໃຊ້ຈ່າຍ.
2. ຄ່າຈ້າງຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ສາມາດຈ້າງໄດ້ໃນມູນຄ່າຕ່ຳຫຼາຍເທົ່າໃດແຮງດີ.

ທ່ານ ປະທານກອງປະຊຸມ ໄດ້ຊີ້ແຈ້ງດັ່ງນີ້:

1. ເຫັນດີນຳກັບການສົ່ງເອກະສານທາງ ອີເລັກໂທນິກ. ບໍລິສັດກໍ່ຈະປັບປຸງໃນເລື່ອງນີ້.
2. ຄ່າກວດສອບບັນຊີພາຍນອກ ບໍລິສັດຈະພະຍາຍາມຕໍ່ລອງກັບ PWC ເພື່ອໃຫ້ໄດ້ລາຄາທີ່ຕ່ຳທີ່ສຸດເທົ່າທີ່ເປັນໄປໄດ້.

ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ ທ່ານ ປະທານກອງປະຊຸມ ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ປະຈຳປີ 2020.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ປະຈຳປີ 2020 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198,827,701 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198,827,701 ສຽງ ຄິດເປັນ 100 %.

ກອງປະຊຸມໄດ້ດຳເນີນຄົບທຸກວາລະແລ້ວ ປະທານກອງປະຊຸມໄດ້ນຳສະເໜີໃຫ້ຜູ້ຖືຮຸ້ນສອບຖາມຕື່ມ ມີຜູ້ຖືຮຸ້ນຖາມດັ່ງນີ້:

ທ່ານ ອິນທະເນດ ນໍຣະສິງຫ໌ ຜູ້ຖືຮຸ້ນມາດ້ວຍຕົນເອງ ປະກອບຄຳເຫັນ: ຢາກໃຫ້ບໍລິສັດເປີດເຜີຍ ແລະ ອັບເດດ ຂໍ້ມູນຕ່າງໆກ່ຽວກັບບໍລິສັດ ໃນເວັບໄຊ໌ຂອງບໍລິສັດໃຫ້ຫຼາຍຂຶ້ນ ເພາະເຂົ້າໄປເບິ່ງເວັບໄຊ໌ບໍລິສັດບໍ່ມີການອັບເດດຂໍ້ມູນ.

ທ່ານ ປະທານກອງປະຊຸມ ໄດ້ຊີ້ແຈ້ງວ່າ: ເລື່ອງຂໍ້ມູນບໍລິສັດເປັນສິ່ງທີ່ສຳຄັນ ບໍລິສັດຈະນຳໄປປັບປຸງແກ້ໄຂໃຫ້ດີຂຶ້ນ ເພື່ອໃຫ້ຜູ້ຖືຮຸ້ນໄດ້ຮັບຂໍ້ມູນທີ່ອັບເດດຂອງບໍລິສັດ.

ທີ່ປະຊຸມຜູ້ຖືຮຸ້ນບໍ່ມີຂໍ້ພິຈາລະນາອື່ນໆຕື່ມອີກ ດັ່ງນັ້ນ, ປະທານກອງປະຊຸມ ຈຶ່ງກ່າວປິດກອງປະຊຸມເວລາ 11:40 ໂມງ.

ດ້ວຍຄວາມເຄົາລົບ ແລະ ນັບຖື,

ປະທານກອງປະຊຸມ

ບໍລິສັດ ປິໂຕຣລ້ຽມການຄ້າ ມະຫາຊົນ Petroleum Trading Lao Public Company

ຈັນທະດອນ ເມກສະຫວັນ
Chanthadom MEKSAVANH

ໝາຍເຫດ: ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ໃຫ້ເອົາສະບັບພາສາລາວເປັນຫຼັກ.